**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 11 ເມສາ 2010 (04-11-2010)**

---

## <u>ມີເຄື່ອງມືຖືກຕ້ອງ:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** (2 ໂກຣິນໂທ 2:14-17; 3:4-5, 18; 4:1-2,5-6,16-18)

**<u>ເປົ້າໝາຍຂອງບົດຮຽນ:</u>**

ບົດຮຽນນີ້ໄດ້ເວົ້າເຖິງຄຸນະວຸດທິຂອງຜູ້ຮັບໃຊ້ທີ່ດີຂອງພຣະຄຣິດ.

**<u>ຄວາມສຳຄັນຂອງບົດຮຽນ:</u>**

ບົດຮຽນນີ້ຊ່ອຍໃຫ້ທ່ານເຂົ້າໃຈວ່າຈຳເປັນຕ້ອງມີອັນໃດແດ່ ຈຶ່ງຈະເປັນຜູ້ຮັບໃຊ້ທີ່ດີ ໃນຖານະເປັນຜູ້ຮັບໃຊ້ຂອງພຣະຄຣິດ.

**<u>ຜົນສະທ້ອນຕໍ່ຊີວິດ:</u>**

ພວກເຮົາໄດ້ຍິນເລື້ອຍໆວ່າ ຄຣິສຕຽນທຸກຄົນເປັນຜູ້ຮັບໃຊ້. ແຕ່ຄວາມຈິງແທ້ແລ້ວ ມັນອາດບໍ່ເປັນຕາມຄວາມເຂົ້າໃຈຂອງຄົນເຮົາ. ມັນເປັນການຖືກຕ້ອງທີ່ຈະເວົ້າວ່າ ຄຣິສຕຽນທຸກຄົນໄດ້ຖືກເອີ້ນຈາກພຣະເຈົ້າ, ມີໜ້າທີ່ຮັບຜິດຊອບ ແລະສາມາດກາຍເປັນຜູ້ຮັບໃຊ້ໄດ້. ບົນຮຽນນີ້ສອນໃຫ້ຜູ້ທີ່ເຊື່ອເຂົ້າໃຈ ແລະມີຄວາມກ້າຫານ ສມັກເປັນຜູ້ຮັບໃຊ້ ຕາມພຣະປະສົງຂອງພຣະເຈົ້າ.

**<u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລົ້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**<u>ແນະນຳ:</u>**

- ຜູ້ທີ່ສມັກເປັນຜູ້ຮັບໃຊ້ຈະຕ້ອງມີຄຸນນະວຸດທິແນວໃດແດ່?
- ແມ່ນຫຍັງທີ່ເປັນອຸປສັກໃນຄວາມພໍພຽງຂອງຜູ້ຮັບໃຊ້ທັງຫລາຍ?
- ຂຽນ ການຮຽກເອີ້ນ, ໜ້າທີ່, ແລະຣະດັບໃສ່ກະດານ. ຊີ້ງຊີ້ໃຫ້ເຫັນວ່າ ຜູ້ທີ່ເຊື່ອທຸກໆຄົນໄດ້ມີສິ່ງເຫລົ່ານີ້ທີ່ພຣະເຈົ້າໄດ້ຊົງປະທານໃຫ້. ແຕ່ກໍເປັນການພິສູດໄດ້ຍາກ.
- ໃນບົດຮຽນນີ້ບໍ່ອາດຄົ້ນພົບໄດ້ໝົດທຸກຢ່າງທີ່ໃຫ້ເປັນຜູ້ຮັບໃຊ້ທີ່ຖືກຕ້ອງຢ່າງຄົບບໍຣິບູນ, ແຕ່ວ່າມັນຈະຊ່ອຍໃຫ້ຜູ້ທີ່ເຊື່ອທັງຫລາຍຮັບເອົາເທື່ອລະຂັ້ນຕອນ ນັ້ນຄືພຣະເຈົ້າຕ້ອງການໃຫ້ຜູ້ຮັບໃຊ້ເປັນ.

## 1. <u>ເປັນໜ້າເຊື່ອຖື:</u> (2 ໂກຣິນໂທ 2:14-17,3:4-5)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 2 ໂກຣິນໂທ 2:14-17; 3:4-5
- ເປັນຫຍັງທ່ານໂປໂລຈຶ່ງຫວ່ານໜັງສືອອກໄປໃຫ້ຜູ້ທີ່ເຊື່ອທັງຫລາຍໃຫ້ມອງເຫັນຊັຍຊະນະທີ່ຄຣິສຕຽນເອົາມາໄດ້ໂດຍພຣະຄຣິດ? ຊຶ່ງສະແດງອອກໃຫ້ເຫັນວ່າທ່ານໂປໂລບໍ່ໄດ້ຮຽກຮ້ອງຄວາມສົນໃຈຂອງຕົນເອງ ແລະບໍ່ໄດ້ເອົາຕົນເອງໄປແທນທີ່ພຣະຄຣິດ.
- ຖ້າຫາກເປັນການພໍໃຈຂອງຄົນໃດຄົນນຶ່ງ ແລະບໍ່ແມ່ນເພື່ອຄົນອື່ນໆ. ຖາມວ່າ ເປັນດ້ວຍເຫດໃດກິ່ນຫອມຫວນຂອງພຣະຄຣິດຈຶ່ງເຮັດໃຫ້ຫລາຍຄົນມີຄວາມພໍໃຈໃນພຣະອົງ ແຕ່ບໍ່ແມ່ນພໍໃຈໃນຄົນອື່ນໆ.
- ຄວາມຮູ້ສຶກຂອງທ່ານສາມາດຂັດຂວາງໃນການປະຕິບັດຮັບໃຊ້ແນວໃດແດ່ບໍ່?

### <u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u> (2 ໂກຣິນໂທ 2:14-17; 3:4-5)

1. ພວກເຮົາໄດ້ນຳຊັຍຊະນະມາເວລາໃດ?
2. ພຣະຄຣິດໄດ້ຊົງຂຍາຍຄວາມຮູ້ຜ່ານທາງບັນດາຜູ້ທີ່ເຊື່ອແນວໃດ?
3. ເປັນຫຍັງກິ່ນອັນຫອມຫວານຂອງພຣະຄຣິດຈຶ່ງເຮັດໃຫ້ຫລາຍຄົນມີຄວາມພໍໃຈ ແລະຕໍ່ຄົນທີ່ກຳລັງຈະຕາຍ?
4. ຜູ້ທີ່ຖືເບົາຕໍ່ພຣະຄຳຂອງພຣະເຈົ້າຈະເປັນແນວໃດ?
5. ຄວາມພໍພຽງມາຈາກໃສ? ເປັນຫຍັງພວກເຮົາຈຳເປັນຕ້ອງມີຄວາມເຂົ້າໃຈວ່າຄວາມພໍພຽງຂອງພວກເຮົາມາຈາກພຣະເຈົ້າ? ຄວາມເຊື່ອໄວ້ວາງໃຈກັບຄວາມພໍພຽງໄດ້ທຳງານຮ່ວມກັນແນວໃດ?

## <u>2..ມີບຸຄລິກລັກສະນະທີ່ຖືກຕ້ອງ:</u> (2 ໂກຣິນໂທ 3:18-4:2)

- ສລຸບໂດຍຫຍໍ້ຂອງພຣະທັມ 2 ໂກຣິນໂທ 3:7-17. ຊຶ່ງເນັ້ນໜັກເຖິງກຽດຕິຍົດຊຶ່ງເປີດເຜີຍທາງວິນຍານຫລາຍກວ່າຜ່ານທາງໂມເຊ. ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 2 ໂກຣິນໂທ 3:18-4:2.
- ເປົ້າໝາຍຂອງການເດີນທາງຊີວິດຄຣິສຕຽນຂອງພວກເຮົາແມ່ນຫຍັງ?
- ເປັນຫຍັງບາງເທື່ອການປະຕິບັດຂອງຄຣິສຕຽນຈຶ່ງເດີນໄປໂດຍບໍ່ປ່ຽນຈິດໃຈ? ປ່ຽນຈິດໃຈແນວໃດ?
- ການກະທຳບາງສິ່ງບາງຢ່າງໄດ້ເຮັດໃຫ້ຈິດວິນຍານປ່ຽນແປງໄປແນວໃດ?
- ບຸຄລິກລັກສະນະອິດທິພົນອັນໃດທີ່ເປັນອັນຕະລາຍຕໍ່ການຮັບໃຊ້ຂອງຜູ້ທີ່ເຊື່ອທັງຫລາຍ? (ເຊັ່ນຕົວຢ່າງ: ການບໍ່ມີກຳລັງໃຈ, ການລໍ້ລວງຕ່າງໆ, ການອິດເມື່ອຍໝົດກຳລັງໃຈ.)

### <u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u> (2 ໂກຣິນໂທ 3:18-4:2)

1. ກຽດຕິຍົດຂອງອົງພຣະເຈົ້າເພີ້ມຂຶ້ນໃນບັນດາຜູ້ທີ່ເຊື່ອທັງຫລາຍແນວໃດ?
2. ເປັນເພາະເຫດໃດບັນດາຜູ້ທີ່ເຊື່ອຈຶ່ງໄດ້ຮັບຄວາມເມດຕາ?
3. ແມ່ນຫຍັງທີ່ເປັນຈຸດປະສົງຂອງຄວາມເມດຕາທີ່ກ່ຽວຂ້ອງກັບຜູ້ທີ່ຮັບໃຊ້?
4. ແມ່ນຫຍັງທີ່ໄດ້ເຮັດໃຫ້ຜູ້ຮັບໃຊ້ເສັຽໃຈ? ແມ່ນຫຍັງແດ່ທີ່ຕ້ອງການສະລະຖິ້ມໄປ?
5. ບັນດາຜູ້ທີ່ເຊື່ອຈະສາມາດຮັກສາພຣະຄຳພຣະເຈົ້າໄວ້ໄດ້ແນວໃດ?

3 . **<u>ມີເປົ້າໝາຍທີ່ຖືກຕ້ອງ:</u>** (2 ໂກຣິນໂທ 4:5-6,16-18)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 1 ໂກຣິນໂທ 15:54ຂ-58
- ໃຫ້ສລຸບສັ້ນໆ ຊຶ່ງພຣະບິດາສ່ອງສວ່າງເຂົ້າໃນຫົວໃຈຂອງພວກເຮົາໃຫ້ແສງສວ່າງໃຫ້ຮູ້ຈັກໃຫ້ກຽດແດ່ພຣະເຈົ້າຊ້ອງພຣະພັກພຣະເຢຊູຄຣິດ.
- ງານຕ່າງໆ ທີ່ພວກເຮົາກະທຳມາຕລອດນັ້ນໄດ້ຖວາຍກຽດແດ່ພຣະອົງເພີ້ມຂຶ້ນຫລືບໍ່?
- ຜູ້ທີ່ເຊື່ອທັງຫລາຍຈະສາມາດປົກປ້ອງຕ້ານທານການເວົ້າຊ້ຳຊາກທີ່ເຮັດໃຫ້ເຈັບປວດນັ້ນໄດ້ແນວໃດ?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** 2 ໂກຣິນໂທ 4:5-6, 16-18

1. ແມ່ນຜູ້ໃດທີ່ຜູ້ທີ່ເຊື່ອທັງຫລາຍທີ່ຖືກເອີ້ນມາໃຫ້ເທສນາ?
2. ພວກເຮົາຈະປົກປ້ອງຜູ້ທີ່ໃຫ້ການເທສນາແນວໃດ?
3. ພວກເຮົາຈະປົກປ້ອງຄົນພາຍນອກທີ່ເຮັດໃຫ້ຜູ້ໃດຜູ້ນຶ່ງສະຕິເສື່ອມເສັຽດ້ວຍວິທີໃດ?
4. ບັນດາຜູ້ທີ່ເຊື່ອຈະສາມາດຮັກສາບໍ່ໃຫ້ມີການເສັຽໃຈໄດ້ແນວໃດ?
5. ຜູ້ທີ່ເຊື່ອຈະສືບຕໍ່ປະກາດກັບຄົນທີ່ເຂົ້າມາໃກ້ຈຸດເປົ້າໝາຍແລ້ວແນວໃດ?

## <u>ພຣະຄັມພີແຫ່ງຄວາມຈິງ</u>

- ພຣະເຈົ້າຈະໃຫ້ພວກເຮົາພຽງພໍສຳລັບການຊ່ວຍເຫລືອ. ພວກເຮົາຕ້ອງໃຊ້ເວລາຕາມທີ່ພຣະອົງຊົງກຳນົດບໍ່ແມ່ນໃຊ້ເວລາຕາມໃຈປາຖນາຂອງພວກເຮົາເອງ.
- ພຣະວິນຍານຂອງພຣະເຈົ້າຈະທຳງານໃນການປ່ຽນແປງພວກເຮົາໃຫ້ທຳງານເໝືອນດັ່ງພຣະຄຣິດ ແລະສິ່ງເຫລົ່ານີ້ຈະສະແດງອອກໃນທ່າທີ ຂອງການຊ່ວຍເຫລືອຂອງພຣະອົງ.
- ໃນພຣະທັມໃຫ້ພວກເຮົາມີໃຈຈົດຈໍ່ໃສ່ໃນພຣະຄຣິດເປັນອົງພຣະຜູ້ເປັນເຈົ້າ. ຄວາມສລາດເລັກໆນ້ອຍໆຈະບໍ່ສຳເຣັດໃນພຣະປະສົງຂອງພຣະເຈົ້າ.
- ຖ້າຫາກພວກເຮົາຫາກມີໃຈຈົດຈໍ່ຢູ່ໃນສິ່ງທີ່ຈັ້ງຢູ່ຕລອດເປັນນິດ, ພວກເຮົາສາມາດອົດທົນຕໍ່ລາຍໄດ້ໜ້ອຍຈາກການທຸກລຳບາກຂອງການບໍຣິການການຊ່ວຍເຫລືອ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**